# ຈຸດປະສົງ ແລະ ຄາດໝາຍສູ້ຊົນ ຮອດປີ 2025

## 1. ຈຸດປະສົງລວມວຽກງານ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຮອດປີ 2025:

### 1.1. ວຽກງານຖະແຫຼງຂ່າວ:

- ເພື່ອພັດທະນາສື່ມວນຊົນລາວໃຫ້ກ້າວສູ່ຄຸນນະພາບ, ທັນສະໄໝ, ວ່ອງໄວ, ຊັດເຈນ, ທັນເຫດການ, ທັນເວລາ ສາມາດເຂົ້າເຖິງໄດ້ທຸກພື້ນທີ່ໃນທົ່ວປະເທດ. ມີຄວາມຫຼາກຫຼາຍ ຄົບຖ້ວນດ້ານເນື້ອໃນ, ເປັນແຫຼ່ງສະໜອງຂໍ້ມູນຂ່າວສານ ແລະ ໃຫ້ສາລະຄວາມຮູ້ຢ່າງຮອບດ້ານໃຫ້ແກ່ ພັກ-ລັດ ແລະ ປະຊາຊົນບັນດາເຜົ່າທຸກຊັ້ນຄົນ, ສ້າງຄວາມເຂັ້ມແຂງ ແລະ ຫັນໄປສູ່ກຸ້ມຕົນເອງໃນລະດັບທີ່ແນ່ນອນ. ຂະຫຍາຍຂອບເຂດການພົວພັນ, ເຊື່ອມໂຍງກັບເວທີສື່ມວນຊົນສາກົນໃຫ້ນັບມື້ ນັບກ້ວາງຂວາງ, ມີຄວາມໝັ້ນຄົງຍືນຍົງ, ຮັບປະກັນຄວາມປອດໄພ ແລະ ສະຖຽນລະພາບທາງດ້ານຂໍ້ມູນຂ່າວສານ, ຊຸກຍູ້ ສົ່ງເສີມ ບຸກຄະລາກອນໜຸ່ມ ທີ່ມີຄຸນທາດທາງດ້ານການເມືອງໜັກແໜ້ນ ແລະ ມີວຸດທິສື່ສານມວນຊົນທີ່ກ້າວໜ້າ ສົມຄູ່ກັບຍຸກສະໄໝ.

### 1.2. ວຽກງານວັດທະນະທຳ:

- ເພື່ອສືບຕໍ່ອານຸລັກ, ປົກປັກຮັກສາ, ສືບທອດ, ຟື້ນຟູ, ເສີມຂະຫຍາຍມູນເຊື້ອ ແລະ ຄຸນຄ່າມໍລະດົກວັດທະ ນະທຳອັນດີງາມ ຂອງຊາດໃຫ້ມີຄວາມຍືນຍົງ, ພັດທະນາອະລິຍະທຳທາງດ້ານວັດຖຸ ແລະ ຈິດໃຈຂອງສັງຄົມ, ພ້ອມທັງຮັບເອົາຄຸນຄ່າວັດທະນະທຳ ທີ່ກ້າວໜ້າ ຂອງມວນມະນຸດຢ່າງມີການເລືອກເຟັ້ນ ແລະ ສອດຄ່ອງກັບຍຸກສະໄໝສາມາດເຊື່ອມໂຍງກັບສາກົນ, ສະກັດກັ້ນສິ່ງຫຍໍ້ທໍ້ທາງດ້ານວັດທະນະທຳທີ່ເປັນໄພຕໍ່ສັງຄົມ. ປັບປຸງ ແລະ ພັດທະນາຜະລິດຕະພັນວັດທະນະທຳ ໃຫ້ມີຄວາມຫຼາກຫຼາຍເພີ່ມຂຶ້ນ ແລະ ມີຄຸນນະພາບສູງ, ກ້າວໄປເຖິງການຫັນເປັນອຸດ ສາຫະກຳ ປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການພັດທະນາ ເສດຖະກິດ-ສັງຄົມ ຂອງຊາດຢ່າງຍືນຍົງ.

### 1.3. ວຽກງານທ່ອງທ່ຽວ:

- ເພື່ອພັດທະນາການທ່ອງທ່ຽວລາວ ໃຫ້ມີຄວາມຍືນຍົງ ຕາມທິດສົ່ງເສີມການທ່ອງທ່ຽວທຳມະຊາດ, ການທ່ອງທ່ຽວວັດທະນະທຳ ແລະ ປະຫວັດສາດ ເຮັດໃຫ້ປະເທດເຮົາ ກາຍເປັນຈຸດໝາຍປາຍທາງການທ່ອງທ່ຽວຂອງນັກທ່ອງທ່ຽວຈາກທົ່ວໂລກ, ເປັນພື້ນຖານໃນການເຊື່ອມຕົວເຂົ້າກັບການທ່ອງທ່ຽວໃນລະດັບພາກພື້ນ ແລະ ສາກົນ, ພັດທະນາ ແລະ ສົ່ງເສີມການທ່ອງທ່ຽວໃຫ້ກາຍເປັນອຸດສາຫະກຳ ແລະ ເປັນຂະແໜງເສດຖະກິດນຳໜ້າ, ຊ່ວຍໃຫ້ປະຊາຊົນມີວຽກເຮັດງານທຳ ແລະ ລຸດພົ້ນຈາກຄວາມທຸກຍາກ ຕາມນະໂຍບາຍຂອງລັດຖະບານ, ປະກອບສ່ວນຊຸກຍູ້ເຮັດໃຫ້ລາຍໄດ້ແຫ່ງຊາດ ເພີ່ມຂຶ້ນໃນລະດັບທີ່ແນ່ນອນ.

### 1.4. ວຽກງານເສນາ:

- ເພື່ອພັດທະນາລະບົບການຄຸ້ມຄອງບໍລິຫານ, ປັບປຸງກົງຈັກການຈັດຕັ້ງ ທັງສູນກາງ ແລະ ທ້ອງຖິ່ນ ໃຫ້ເຂັ້ມແຂງ, ກະທັດຮັດ, ມີຄຸນນະພາບ ແລະ ທັນສະໄໝ. ສຶກສາ ຄົ້ນຄວ້າ ວາງແຜນພັດທະນາວຽກງານ ຖວທ ຢ່າງມີວິທະຍາສາດ, ຈັດຕັ້ງປະຕິບັດແຜນພັດທະນາວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຢ່າງມີຈຸດສຸມແລະໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ ຂອງແຕ່ລະໄລຍະ.

## 2. ຄາດໝາຍສູ້ຊົນ ວຽກງານ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຮອດປີ 2025:

### 2.1. ວຽກງານຖະແຫຼງຂ່າວ:

- ສູ້ຊົນພັດທະນາບຸກຄະລາກອນສື່ມວນຊົນໃຫ້ໄດ້ **6.000** ເທື່ອຄົນ, ໃຫ້ມີຄວາມຮູ້ ຄວາມສາມາດທາງດ້ານວິຊາການ, ນິຕິກຳ, ກົດໝາຍ ແລະ ທິດສະດີການເມືອງ ເພື່ອຮອງຮັບການພັດທະນາວຽກງານຖະແຫຼງຂ່າວ-ສື່ມວນຊົນ.
- ສູ້ຊົນກໍ່ສ້າງຂະຫຍາຍພື້ນຖານໂຄງລ່າງສື່ມວນຊົນ, ປັບປຸງວຽກງານ IT ເພື່ອເປັນສູນກາງ ໃນການບໍລິການ ແລະ ຄຸ້ມຄອງຜະລິດຕະພັນສື່ມວນຊົນໃນທົ່ວປະເທດ.
- ສູ້ຊົນປັບປຸງ ແລະ ປ່ຽນຖ່າຍລະບົບເຕັກນິກໃຫ້ທັນສະໄໝ ຈາກ ລະບົບອານາລ໋ອກ ໄປສູ່ລະບົບດີຈີຕ໋ອນໃຫ້ໄດ້ໃນຂອບເຂດທົ່ວປະເທດ ແລະ ສາມາດເຊື່ອມໂຍງກັບສາກົນ.
- ສູ້ຊົນຂະຫຍາຍການຮ່ວມມືດ້ານວຽກງານຖະແຫຼງຂ່າວ-ສື່ມວນຊົນກັບສາກົນ, ມີຄວາມໝັ້ນທ່ຽງຮັບປະກັນສະຖຽນລະພາບດ້ານ ຂໍ້ມູນຂ່າວສານ.
- ສູ້ຊົນປັບປຸງໃຫ້ຂະແໜງການຖະແຫຼງຂ່າວ-ສື່ມວນຊົນໃຫ້ມີເນື້ອໃນ ຄົບຖ້ວນແຫຼມຄົມ, ມີຫຼາຍຮູບ ຫຼາຍສີ ແລະ ສິ່ງຜ່ານພາຫະນະສື່ມວນຊົນໃຫ້ລົງເຖິງປະຊາຊົນໃນຂອບເຂດ ທົ່ວປະເທດ.
- ສູ້ຊົນຫັນການຄຸ້ມຄອງ ອົງການສື່ມວນຊົນ ພາຍໃນປະເທດດ້ວຍ ລະບຽບ-ກົດໝາຍ.

**2.2. ວຽກງານວັດທະນະທຳ:**

- ສູ້ຊົນສ້າງໃຫ້ມີຄອບຄົວວັດທະນະທຳ, ບ້ານວັດທະນະທຳ ແລະ ກຸ່ມບ້ານວັດທະນະທຳໃຫ້ກວ້າງຂວາງ.
- ສູ້ຊົນຟື້ນຟູ, ປະຕິສັງຂອນ, ອະນຸລັກ ແລະ ສົ່ງເສີມ ມໍລະດົກວັດທະນະທຳທາງດ້ານວັດຖຸ ແລະ ບໍ່ເປັນວັດຖຸ ທີ່ເປັນເອກະລັກແຕ່ລະປະເພດ ໃຫ້ໄດ້ເພີ່ມຂຶ້ນໃນທຸກປີ.
- ສູ້ຊົນສ້າງແຜນແມ່ບົດຄຸ້ມຄອງ, ປົກປັກຮັກສາທົ່ງໄຫຫີນແຂວງຊຽງຂວາງ ແລະຫີນໜາມໜໍ່ ແຂວງຄຳມ່ວນ ໃຫ້ສຳເລັດ.
- ສູ້ຊົນຍົກລະດັບມໍລະດົກວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດລະດັບທ້ອງຖິ່ນໃຫ້ເປັນມໍລະດົກລະດັບຊາດໃຫ້ໄດ້ຫຼາຍຂຶ້ນ.
- ສູ້ຊົນປັບປຸງ ແລະ ພັດທະນາພື້ນຖານໂຄງລ່າງການຜະລິດຮູບເງົາ ໃຫ້ກາຍເປັນອຸດສາຫະກຳເທື່ອລະກ້າວ.
- ສູ້ຊົນຊຸກຍູ້, ສົ່ງເສີມການສ້າງຕັ້ງ ບໍລິສັດຜະລິດຮູບເງົາ ພາກເອກະຊົນໃຫ້ໄດ້ຫຼາຍຂຶ້ນ ແລະ ໄດ້ມາດຕະຖານສາກົນ.
- ສູ້ຊົນປຸກລະດົມຊຸກຍູ້, ຈັດຕັ້ງສຳນັກພິມຢູ່ບາງຂະແໜງວິຊາການທີ່ຈຳເປັນ, ນະຄອນຫຼວງ ແລະ ແຂວງ ໄດ້ບ່ອນລະ **1** ແຫ່ງ ແລະ ຮ້ານຈຳໜ່າຍປຶ້ມ-ສິ່ງພິມອື່ນໆ ໃຫ້ເພີ່ມຂຶ້ນ.
- ສູ້ຊົນແຈກຢາຍ ແລະ ຈຳຫນ່າຍປຶມ-ສິ່ງພິມອື່ນໃຫ້ທົ່ວເຖິງ, ໂດຍສະເພາະເຂດຫ່າງໄກສອກຫຼີກໃຫ້ໄດ້ **2/3** ໃນປີ **2025**.

**2.3. ວຽກງານທ່ອງທ່ຽວ:**

- ສູ້ຊົນດຶງດູດນັກທ່ອງທ່ຽວເຂົ້າມາຢ້ຽມຢາມ ສປປ ລາວ ໃຫ້ໄດ້ປະມານ **8** ລ້ານຄົນຕໍ່ປີ, ສະເລ່ຍ ໄລຍະການພັກເຊົາ ຂອງນັກທ່ອງທ່ຽວບໍ່ຕ່ຳກວ່າ **12** ວັນ/ຄົນ, ແລະ ສ້າງລາຍຮັບຈາກການທ່ອງທ່ຽວ ໃຫ້ໄດ້ບໍ່ຕ່ຳກວ່າ **1,500** ລ້ານໂດລາສະຫະລັດຕໍ່ປີ.
- ສູ້ຊົນພັດທະນາຜະລິດຕະພັນການທ່ອງທ່ຽວ ໜຶ່ງເມືອງໜຶ່ງຜະລິດຕະພັນໃນທົ່ວປະເທດ ໃຫ້ໄດ້ເພີ່ມຂຶ້ນ.

- ສຳເລັດການກໍ່ສ້າງ ສິ່ງອຳນວຍຄວາມສະດວກໃນແຫຼ່ງທ່ອງທ່ຽວໃຫ້ໄດ້ບໍ່ຕໍ່າກວ່າ 300 ແຫ່ງ. ປັກຫຼັກໝາຍ ຂອບເຂດແຫຼ່ງທ່ອງທ່ຽວໃຫ້ສຳເລັດ ໃນແຕ່ລະແຂວງ ແລະ ສູ້ຊົນໃຫ້ມີຫ້ອງຂໍ້ມູນຂ່າວສານການທ່ອງທ່ຽວ ພ້ອມທັງປະກອບອຸປະກອນການສື່ສານ ໃຫ້ເປັນລະບົບຢູ່ແຕ່ລະແຂວງ ແລະ ດ່ານສາກົນ.
- ພັດທະນາຜະລິດຕະພັນການທ່ອງທ່ຽວ ແບບປະຊາຊົນມີສ່ວນຮ່ວມ ໃຫ້ໄດ້ຫຼາຍກວ່າ 150 ຜະລິດຕະພັນ.
- ຮອດປີ 2025 ສູ້ຊົນໃຫ້ພະນັກງານທີ່ເຮັດວຽກໃນຂະແໜງການທ່ອງທ່ຽວ ໄດ້ຮັບການຝຶກອົບຮົມຍົກລະ ດັບວິຊາການ ຢ່າງໜ້ອຍ 6,000 ຄົນ.
- ສູ້ຊົນສ້າງນິຕິກຳ ແລະ ມາດຕະຖານການຄຸ້ມຄອງການທ່ອງທ່ຽວ ໃຫ້ສອດຄ່ອງກັບມາດຕະຖານອາຊຽນ. ສຳເລັດການເຜີຍແຜ່ກົດໝາຍການທ່ອງທ່ຽວ ແລະ ບັນດານິຕິກຳ ຂອງຂະແໜງການທ່ອງທ່ຽວ ໃນຂອບເຂດທົ່ວປະເທດ.
- ສູ້ຊົນໃຫ້ມີເອກະສານ ແລະ ສິ່ງພິມໂຄສະນາກ່ຽວກັບການທ່ອງທ່ຽວລາວ (ແຜນທີ່, ແຜ່ນພັບ, ປື້ມຄູ່ມື, ປັດສະເຕີ CD, DVD,TV Spot, ສາລະຄະດີ ແລະ ອື່ນໆ) ໃຫ້ຄົບຖ້ວນ ແລະ ພຽງພໍກັບຄວາມຕ້ອງການ ທັງສາມາດ ລົງໂຄສະນາໃນສື່ຕ່າງໆ ຢູ່ພາຍໃນ ແລະ ຕ່າງ ປະເທດ.

### 2.4. ວຽກງານເສນາ:

- ສູ້ຊົນປະກອບອຸປະກອນຮັບໃຊ້ວຽກງານວິຊາການໃຫ້ທັນສະໃໝໃນທົ່ວຂະແໜງການ ຕາມຄວາມຕ້ອງການ ຂອງວຽກງານ ໃນແຕ່ລະໄລຍະ.
- ສູ້ຊົນສ້າງລະບົບຖານຂໍ້ມູນ ແບບເອເລັກໂຕນິກ (E-Government) ສາມາດເຊື່ອມໂຍງຂໍ້ມູນຂ່າວສານການເຄື່ອນໄຫວວຽກງານ ຂອງຂະແໜງ ຖວທ ທັງສູນກາງ ແລະ ທົ່ວທ້ອງຖິ່ນໃຫ້ໄດ້ ສຳເລັດ 100%.
- ສູ້ຊົນປັບປຸງກົງຈັກການຈັດຕັ້ງຂອງ ພັກ-ລັດ, ອົງການຈັດຕັ້ງມະຫາຊົນ ຂັ້ນກະຊວງໃຫ້ມີຄວາມໜັກແໜ້ນ ແລະ ເຂັ້ມແຂງຂຶ້ນໄປເລື້ອຍໆ.
- ສູ້ຊົນຍົກລະດັບວິຊາສະເພາະ ໃຫ້ແກ່ພະນັກງານທົ່ວກະຊວງໄປຮຽນພາຍໃນບໍ່ໃຫ້ຫຼຸດ 700 ຄົນ ແລະຮຽນ ຕ່າງປະເທດບໍ່ຫຼຸດ 400 ຄົນ.
- ສູ້ຊົນສ້າງແຜນຍຸດທະສາດພັດທະນາວຽກງານຖະແຫຼງຂ່າວ,ວັດທະນະທຳ ແລະທ່ອງທ່ຽວ ຂອງ ສປປ ລາວ ສຳລັບ 2021-2030 ໃຫ້ສຳເລັດ
- ສູ້ຊົນເຮັດໃຫ້ແມ່ຍິງມີບົດບາດ ແລະ ມີຈຳນວນເພີ່ມຂຶ້ນໃນການຕັດສິນບັນຫາ ແລະ ຊີ້ນຳວຽກງານຕ່າງໆ ຂອງກະຊວງ.
- ສູ້ຊົນຂະຫຍາຍຕາໜ່າງການຮ່ວມມືສາກົນ, ໃນຂອບຮ່ວມມື 2 ຝ່າຍ, ຫຼາຍຝ່າຍໃຫ້ໄດ້ຫຼາຍເພີ້ມຂຶ້ນ.
- ສູ້ຊົນປັບປຸງວຽກງານກວດກາທົ່ວຂະແໜງ ຖວທ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.
- ສູ້ຊົນລະດົມທຶນຈາກພາຍໃນ ແລະ ຕ່າງປະເທດເຂົ້າໃນການພັດທະນາວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວໃຫ້ມີຈຳນວນເພີ່ມຂຶ້ນ.